# EMERGENCY BROADBAND BENEFIT

## ຕ້ອງການຄວາມຊ່ວຍເຫຼືອກ່ຽວກັບຄ່າໃຊ້ຈ່າຍອິນເຕີເນັດບໍ?

EMERGENCY BROADBAND BENEFIT FCC

**ຂັ້ນຕອນ 1** ຂ້ອຍມີສິດໄດ້ຮັບບໍ?

ເບິ່ງທີ່ **GetEmergencyBroadband.org/do-i-qualify/** ເພື່ອເບິ່ງວ່າທ່ານມີສິດໄດ້ຮັບບໍ່.



**ຂັ້ນຕອນ 2** ຖ້າທ່ານມີສິດໄດ້ຮັບ, ແມ່ນຫຍັງທີ່ອະທິບາຍສະຖານະການຂອງທ່ານໄດ້ດີທີ່ສຸດ?

### ຂ້ອຍບໍ່ມີບໍລິການອິນເຕີເນັດ.

- ກວດເບິ່ງວ່າທ່ານມີສິດໄດ້ຮັບໂດຍການໂທຫາ **833-511-0311**.
- ສະໝັກຜ່ານ **National Verifier (ຜູ້ກວດສອບລະດັບຊາດ)** ແລະ ຫຼັງຈາກນັ້ນເລືອກເອົາຜູ້ໃຫ້ບໍລິການອິນເຕີເນັດທີ່ເຂົ້າຮ່ວມ
- ສະໝັກຜ່ານຜູ້ໃຫ້ບໍລິການບໍລິການອິນເຕີເນັດທີ່ເຂົ້າຮ່ວມ.

### ຂ້ອຍມີບໍລິການອິນເຕີເນັດທີ່ມີລາຍໄດ້ຕ່ຳ.

- ໂທ ຫຼື ຕິດຕໍ່ທາງອອນລາຍກັບຜູ້ໃຫ້ບໍລິການອິນເຕີເນັດຂອງທ່ານ. ສອບຖາມ ຫຼື ຄົ້ນຫາ ເງິນຊ່ວຍເຫຼືອອິນເຕີເນັດສຸກເສີນ (Emergency Broadband Benefit, EBB).
- ຖ້າທ່ານໃຊ້ສ່ວນຫຼຸດ ສຳ ລັບການບໍລິການຄວາມໄວສູງ ແລະ ຄ່າໃຊ້ຈ່າຍທີ່ສູງຂຶ້ນ, ທ່ານຕ້ອງ "ເລືອກໃຊ້" ເພື່ອໃຫ້ທ່ານໄດ້ຮັບອິນເຕີເນັດລາຄາຕ່ຳກວ່າເມື່ອ EBB ສິ້ນສຸດລົງ.
- ອີກທາງເລືອກແມ່ນລະໝັກສຳລັບເງິນຊ່ວຍເຫຼືອອິນເຕີເນັດສຸກເສີນ **National Verifier (ຜູ້ກວດສອບລະດັບຊາດ)** ແລະ ຮັບການບໍລິການເພີ່ມເຕີມຈາກຜູ້ໃຫ້ບໍລິການອື່ນ.

### ຂ້ອຍມີບໍລິການອິນເຕີເນັດແຕ່ມັນບໍ່ແມ່ນສ່ວນໜຶ່ງ ຂອງໂຄງການຜູ້ທີ່ທີ່ມີລາຍໄດ້ຕ່ຳ.

- ກວດສອບກັບຜູ້ໃຫ້ບໍລິການອິນເຕີເນັດຂອງທ່ານ ເພື່ອເບິ່ງວ່າທ່ານສາມາດນຳໃຊ້ສ່ວນຫຼຸດໃຫ້ກັບການບໍລິການໃນປະຈຸບັນຂອງທ່ານ ຫຼື ຖ້າທ່ານສາມາດເລືອກລະດັບການບໍລິການອິນເຕີເນັດໃນລະດັບທີ່ແຕກຕ່າງກັນ ແລະ ນຳໃຊ້ສ່ວນຫຼຸດ.

### ຂ້ອຍມີບໍລິການອິນເຕີເນັດແຕ່ຕ້ອງການປ່ຽນການບໍລິການຂອງຂ້ອຍ.

- ທ່ານສາມາດນຳໃຊ້ສ່ວນຫຼຸດເງິນຊ່ວຍເຫຼືອອິນເຕີເນັດສຸກເສີນ ເພື່ອໃຫ້ໄດ້ຮັບການບໍລິການຜ່ານມືຖື ຫຼື ເພີ່ມການບໍລິການອິນເຕີເນັດອື່ນ ສຳລັບຄົວເຮືອນຂອງທ່ານ. (ຄົວເຮືອນໜຶ່ງ ອາດຈະໄດ້ຮັບສ່ວນຫຼຸດຄັ້ງດຽວເທົ່ານັ້ນ.)
- ສະໝັກ ທີ່ **GetEmergencyBroadband.org**, ຫຼັງຈາກນັ້ນເລືອກເອົາ ຜູ້ໃຫ້ບໍລິການອິນເຕີເນັດ ເມື່ອໄດ້ຮັບການອະນຸມັດແລ້ວ.

### ຂ້ອຍມີບັນຊີທີ່ໄດ້ຮັບການສະໜັບສະໜູນຈາກໂຮງຮຽນ.

- ກວດສອບກັບໂຮງຮຽນຂອງທ່ານເພື່ອເບິ່ງວ່າເມື່ອບັນຊີຜູ້ອຸປະຖຳສິ້ນສຸດລົງຕອນໃດ. ຕົວເລືອກຂອງທ່ານປະກອບມີ:
  - ສອບຖາມຜູ້ໃຫ້ບໍລິການອິນເຕີເນັດໃນປະຈຸບັນວ່າທ່ານສາມາດຢູ່ ຫຼື ລົງທະບຽນເຂົ້າຮ່ວມໂຄງການອິນເຕີເນັດທີ່ມີລາຍໄດ້ຕ່ຳ ແລະ ໃຊ້ການຫຼຸດລາຄາເງິນຊ່ວຍເຫຼືອອິນເຕີເນັດສຸກເສີນ.
  - ຮັບອິນເຕີເນັດຈາກຜູ້ໃຫ້ບໍລິການອິນເຕີເນັດໃໝ່ ແລະ ສະໝັກເອົາເງິນຊ່ວຍເຫຼືອ EBB ຊົ່ວຄາວ. ພິຈາລະນາຜູ້ໃຫ້ບໍລິການອິນເຕີເນັດທີ່ມີໂຄງການອິນເຕີເນັດທີ່ມີລາຍໄດ້ຕ່ຳຢ່າງຕໍ່ເນື່ອງແລະລາຄາບໍ່ແພງ.

### ຂ້ອຍມີບໍລິການ Lifeline.

- ທ່ານມີສິດໄດ້ຮັບໂດຍອັດຕະໂນມັດແຕ່ວ່າທ່ານຕ້ອງລົງທະບຽນ ເພື່ອນຳໃຊ້ສ່ວນຫຼຸດເງິນຊ່ວຍເຫຼືອອິນເຕີເນັດສຸກເສີນ.
- ທ່ານສາມາດເກັບຜູ້ໃຫ້ບໍລິການເດີມໄວ້. ທ່ານສາມາດໃຊ້ເງິນຊ່ວຍເຫຼືອກັບລະດັບບໍລິການອິນເຕີເນັດໃນປະຈຸບັນຂອງທ່ານ ຫຼື ເພີ່ມລະດັບໃນຂະນະທີ່ຢູ່ເງິນຊ່ວຍເຫຼືອອິນເຕີເນັດສຸກເສີນ.
- ທ່ານສາມາດຮັບເອົາຜູ້ໃຫ້ບໍລິການອິນເຕີເນັດໃໝ່ ເພື່ອໃຫ້ບໍລິການ ແລະ ນຳໃຊ້ສ່ວນຫຼຸດໃຫ້ກັບການບໍລິການໃໝ່ໄດ້.

### ຂ້ອຍອາໄສຢູ່ໃນພື້ນທີ່ຂອງຊົນເຜົ່າ.

- ຖ້າທ່ານອາໄສຢູ່ໃນພື້ນຂອງຊົນເຜົ່າ ແລະມີຄຸນສົມບັດກົງກັບຂໍ້ກຳນົດການມີສິດໄດ້ຮັບອື່ນໆ,ທ່ານສາມາດໄດ້ຮັບ ທັງໝົດ ຫຼຸດລາຄາລາຍເດືອນສູງເຖິງ **$75** ພ້ອມທັງຫຼຸດລາຄາອຸປະກອນ.
- ເບິ່ງທີ່ **ເວັບໄຊທ໌ກ່ຽວກັບຜົນປະໂຫຍດຂອງຊົນເຜົ່າ** ເພື່ອຮຽນຮູ້ເພີ່ມເຕີມ.

**ກົດສຳລັບຂໍ້ມູນເພີ່ມເຕີມ:** **ຜູ້ໃຫ້ບໍລິການອິນເຕີເນັດ EBB ຂອງລັດ WA**

THE SEAL OF THE STATE OF WASHINGTON 1889 · King County · Seattle

KC DCE 11553w